## ບົດທີ 2

# ຫຼັກຖານທີ່ພະເຢຊູຄືນຈາກຕາຍ: ພາກຕົ້ນ

*ນັກປະວັດສາດຫຼາຍຄົນເຊື່ອວ່າ ບໍ່ມີເຫດການໃດໃນປະຫວັດສາດໂລກທີ່ມີຫຼັກຖານແນ່ນອນກວ່າການຄືນ ພະຊົນຂອງພະເຢຊູ. ໃນບົດຮຽນນີ້ເຮົາຈະຮຽນເລື່ອງຫຼັກຖານເຫຼົ່ານັ້ນ.*




**1** ໃນບົດຮຽນນີ້ທັງບົດຮຽນໜ້າ ເຮົາຈະສຶກສາເລື່ອງຫຼັກຖານ 3 ປະການທີ່ພະອົງຄືນຈາກຕາຍຄື: **ອຸບໂມງຫວ່າງເປົ່າ.** ແມ່ນຮູບໃດໃນໜ້າປົກບົດນີ້ທີ່ສະແດງເຖິງອຸບໂມງຫວ່າງເປົ່ານັ້ນ? ___

**2** ຮູບ “ຂ” ນັ້ນສະແດງຫຼັກຖານໃດທີ່ພະອົງຄືນພະຊົນ? ___________________________

*ຜູ້ທີ່ບໍ່ໄວ້ວາງໃຈໃນພະເຢຊູ ອາດຈະຄິດວ່າມີຄົນມາລັກສົບຂອງພະອົງໄປ. ອາດຈະເປັນພວກເຈົ້ານາຍຊາດຢິວ ອາດຈະແມ່ນພວກສາວົກ ຫຼືອາດຈະແມ່ນຄົນຂີ້ລັກເອົາສົບໄປ.*

**3** ຖ້າແມ່ນວ່າພວກເຈົ້ານາຍລັກເອົາ ຈະແມ່ນເຈົ້ານາຍຊາດໃດ? ____________________

**4** ລອງເບິ່ງວ່າຈະເປັນໄປໄດ້ບໍ່! ໃນລາຍຊື່ຂໍ້ພະຄຳພີຕໍ່ໄປນີ້ ແມ່ນຂໍ້ໃດທີ່ສະແດງໃຫ້ເຫັນວ່າ ສາດສະໜາຄຼິດຂຶ້ນຢູ່ກັບ ການຄືນພະຊົນ. (ເລືອກ ຫຼາຍຂໍ້)

| | |
|---|---|
| ກຈກ 2:32 | ກຈກ 4:33 |
| ກຈກ 2:46 | ກຈກ 5:19 |
| ກຈກ 3:15 | ກຈກ 5:30 |
| ກຈກ 4:10 | ກຈກ 6:14 |



**5** ຕາມໃນຂໍ້ພະຄຳພີເຫຼົ່ານັ້ນ ສາດສະໜາຄຼິດອີງອາໄສເຫດການໃດ? ________________

**6** ໃຫ້ອ່ານ ກຈກ 4:2-3 ແລະ ຂໍ້ 18. ພວກເຈົ້ານາຍຊາດຢິວມີທ່າທີໃດຕໍ່ພວກສາວົກທີ່ເທດສະໜາປ່າວປະກາດ? (ເລືອກ)

ກ. ______ ຕໍ່ສູ້ ຂ. ______ ເຫັນດີ ຄ. ______ ບໍ່ເປັນຫຍັງ

**7** ຖ້າແມ່ນວ່າເຈົ້ານາຍຊາດຢິວມາລັກສົບຂອງພະອົງໄປ ເຂົາຈະສະແດງໃຫ້ປະຊາຊົນເຫັນຢ່າງເປີດເຜີຍ. ເຂົາຈະຄິດ ຢ່າງໃດ? (ເລືອກ)

ກ. ທຸກຄົນຈະເຊື່ອວ່າພະເຢຊູຄືນຈາກຕາຍແທ້

ຂ. ທຸກຄົນຈະຮູ້ວ່າພະເຢຊູບໍ່ຄືນ ເພາະເຫັນສົບຍັງຢູ່

ຄ. ເຂົາຈະກາບໄຫວ້ສົບຄົນຕາຍນັ້ນ

**8** ຖ້າເຈົ້ານາຍຊາດຢິວລັກເອົາສົບໄປ ເຂົາຈະສະແດງສົບນັ້ນໃຫ້ປະຊາຊົນຮູ້ວ່າ ພະເຢຊູບໍ່ໄດ້ຄືນຈາກຕາຍ.

ກ. ພວກເຈົ້ານາຍນັ້ນ ຢາກຈະຍົກຫຼັກຖານວ່າພະເຢຊູບໍ່ຄືນບໍ່? ____________________

ຂ. ເຫັນເຂົາຍົກສົບມາເປັນຫຼັກຖານຢ່າງນັ້ນບໍ່? ______________________________

**9** ເປັນຫຍັງພວກເຈົ້ານາຍຢິວບໍ່ໄດ້ເອົາສົບຂອງພະອົງມາສະແດງໃຫ້ປະຊາຊົນເຫັນ? (ເລືອກ)

ກ. ເຂົາບໍ່ຢາກໃຫ້ພວກສາວົກໂສກເສົ້າ

ຂ. ເຂົາບໍ່ຢາກໃຫ້ເກີດມີເລື່ອງກັບທະຫານໂລມ

ຄ. ເຂົາບໍ່ມີສົບຂອງພະອົງ

ງ. ເຂົາຢາກໃຫ້ປະຊາຊົນເຊື່ອພວກສາວົກ

**10** ເຫັນວ່າພວກເຈົ້ານາຍຢິວຢາກຍົກຫຼັກຖານວ່າ ພະເຢຊູບໍ່ໄດ້ຄືນຈາກຕາຍ ແຕ່ເຂົາບໍ່ຍົກສົບມາສະແດງໃຫ້ຄົນເຫັນ ເພາະຫຍັງ? ________________________________________

**11** ຖ້າພວກເຈົ້ານາຍຊາດຢິວມີສົບຂອງພະອົງຢູ່ນຳ ເຂົາຈະເຮັດຫຍັງ? ________________

______________________________________________________________

**12** ຖ້າມີຄົນມາຖາມທ່ານຜູ້ຮຽນວ່າ ແມ່ນໂດຍເຫດໃດທີ່ທ່ານຮູ້ວ່າເຈົ້ານາຍຊາດຢິວບໍ່ໄດ້ລັກສົບຂອງພະອົງທ່ານຈະຕອບ ຢ່າງໃດ? ____________________

____________________

____________________

**13** ກ. ໃຫ້ທ່ານບອກຫຼັກຖານທີ 1 ວ່າພະເຢຊູຄືນຈາກຕາຍ? ____________________

ຂ. ຖ້າເຈົ້ານາຍລັກສົບໄປ ຈະເປັນເຈົ້ານາຍຊາດໃດ? ____________________

ຄ. ເຮົາຈະຮູ້ໄດ້ຢ່າງໃດວ່າ ພວກເຂົາບໍ່ໄດ້ລັກສົບພະອົງໄປ?____________________

____________________

*ຄືເຈົ້ານາຍຊາດຢິວບໍ່ໄດ້ລັກສົບຂອງພະອົງ.*
*ແຕ່ຜູ້ທີ່ບໍ່ເຊື່ອອາດຈະຫາຄວາມວ່າ ແມ່ນແຕ່ຂະໂມຍລັກສົບໄປ.*

**14** ກ. ໃນສາຍຕາຂອງຂະໂມຍ ມີສິ່ງໃດທີ່ຈະເປັນລາຄາ? (ເລືອກ)

______ ສົບຄົນຕາຍ ______ ຜ້າປ່ານ

ຂ. ໃຫ້ອ່ານໂຢຮັນ 20:2-7 ມີສິ່ງໃດທີ່ຍັງຢູ່ໃນອຸບໂມງ? (ເລືອກ)

______ ສົບ ______ ຜ້າປ່ານ

ຄືວ່າສົບບໍ່ມີລາຄາຂາຍກໍບໍ່ໄດ້ ແຕ່ຜ້າປ່ານທີ່ມີລາຄາຍັງມີຢູ່.

**15** ກ. ຂະໂມຍຈະເອົາຂອງທີ່ມີລາຄາ ຫຼືຈະເອົາຂອງທີ່ບໍ່ມີລາຄາ? ____________________

ຂ. ເຂົາຈະປະຂອງທີ່ມີລາຄາໄວ້ຢູ່ໃນອຸບໂມງບໍ່? ____________________

ຄ. ທີ່ເຂົາຈະລັກແຕ່ສົບຂອງພະເຢຊູຈະມີຜົນກໍາໄລບໍ່ ____________________

ງ. ຖ້າແມ່ນຂະໂມຍມາລັກ ເຂົາຈະລັກສິ່ງໃດ? (ເລືອກ)

______ ລັກຜ້າປ່ານປະສົບໄວ້

______ ລັກແຕ່ສົບປະຜ້າປ່ານໄວ້

______ ບໍ່ລັກຫຍັງເລີຍ

**16** ກ. ເບິ່ງຄືພວກຜູ້ນໍາຊາດຢິວບໍ່ໄດ້ລັກສົບຂອງພະອົງໄປເພາະຖ້າເຂົາລັກເຂົາຈະສາມາດສະແດງຫຍັງ ____________________

ຂ. ເປັນຫຍັງເຂົາຈຶ່ງຢາກສະແດງໃຫ້ຄົນເຫັນ? ____________________

ຄ. ຖ້າເປັນຂະໂມຍລັກ ເຂົາຈະລັກສິ່ງໃດ? ____________________

ງ. ຈະປະສິ່ງໃດໄວ້? ____________________

*ມີບາງຄົນທີ່ອາດຈະຍອມຮັບຮູ້ວ່າ ເຈົ້ານາຍບໍ່ໄດ້ລັກທັງຂະໂມຍກໍບໍ່ໄດ້ລັກ ແຕ່ອາດຈະເປັນລູກສິດຂອງພະອົງມາລັກເອົາ.*



**17** ນັ້ນແຫຼະ ພວກສາວົກມີສາເຫດທີ່ຈະຮັບເອົາສົບຂອງພະອົງໄປເນາະ!

ກ. ຖ້າພວກສາວົກລັກສົບຂອງພະອົງໄປ ເຂົາເອງຈະເຊື່ອໃນການຄືນພະຊົນບໍ່? ________

ຂ. ເຫັນທ່າທີຂອງພວກສາວົກກໍປາກົດວ່າ ເຂົາເຊື່ອແນ່ໃຈວ່າ ໃຜຄືນມາຈາກຕາຍ? _____

**18** ເພາະເຫດໃດຈຶ່ງວ່າບໍ່ແມ່ນພວກລູກສິດຂອງພະອົງລັກສົບຂອງພະອົງໄປ? (ເລືອກ)

ກ. ເຂົາສົງໄສວ່າບໍ່ມີການຄືນພະຊົນ

ຂ. ເຫັນວ່າເຂົາເຊື່ອແນ່ນອນໃນການຄືນພະຊົນ

ຄ. ເຂົາບໍ່ຮູ້ເລື່ອງການຄືນພະຊົນ

**19** ບໍ່ແມ່ນວ່າພວກສາວົກໄດ້ລັກພະສົບຂອງພະອົງໄປ ເພາະເຫັນວ່າເຂົາເອງ ______ ຢ່າງແນ່ນອນວ່າພະອົງຄືນມາ. (ຕື່ມຄວາມທີ່ຂາດ)

*ຜູ້ບໍ່ເຊື່ອອາດຈະຕິວ່າ ພວກສາວົກພຽງແຕ່ແກ້ງເຮັດວ່າເຊື່ອແທ້ ຈຶ່ງຈະປິດເລື່ອງໄວ້*

**20** ໃຫ້ອ່ານ ຂໍ້ພະຄຳພີດັ່ງຕໍ່ໄປນີ້. ມີຂໍ້ໃດແດ່ທີ່ສະແດງວ່າ ພວກລູກສິດຂອງພະອົງຍອມສ່ຽງໄພຖືກການຂົ່ມເຫງ ຫຼືຕາຍ ເພາະເຂົາເທດສະໜາເລື່ອງການຄືນພະຊົນ.

ກ. _____ ກຈກ 2:46 ຂ. _____ ກຈກ 4:2-3

ຄ. _____ ກຈກ 5:30-33 ແລະ 40 ງ. _____ ກຈກ 7:56-60

**21** ພວກລູກສິດຂອງພະອົງເຊື່ອໃນການຄືນພະຊົນຈົນກວ່າເຂົາຍອມຕາຍກ່ອນຈະເລີກເທດສະໜາປ່າວປະກາດ. ສະ ແດງວ່າຫຍັງ? (ເລືອກ)

ກ. ເຂົາບໍ່ເຊື່ອໃນການຄືນພະຊົນ

ຂ. ມີແຕ່ເຂົາແກ້ງເຮັດວ່າເຊື່ອໃນການຄືນພະຊົນ

ຄ. ເຂົາເຊື່ອໃນການຄືນພະຊົນ

**22** ຖ້າເຂົາພຽງແຕ່ແກ້ງເຮັດວ່າເຊື່ອ ຈະເປັນຢ່າງໃດ? (ເລືອກ)

ກ. ເຂົາຈະບໍ່ປ່າວປະກາດເພື່ອບໍ່ໃຫ້ໃຜມາຂົ່ມເຫງ.

ຂ. ເຂົາຕ້ອງເທດສະໜາເຖິງຈະຖືກຂົ່ມເຫງກໍຕາມ.

ຄ. ເຂົາຈະຖະຫວາຍຕົວໃຫ້ປ່າວປະກາດຂ່າວປະເສີດ.

**23** ເຫັນວ່າພວກລູກສິດຂອງພະອົງ ເຊື່ອຢ່າງແນ່ນອນວ່າພະອົງຄືນມາຈາກຕາຍເພາະເຂົາຍອມສ່ຽງໄພຈົນເຖິງຫຍັງ? ____________________________________________

**24** ສ່ວນຜູ້ທີ່ບໍ່ເຊື່ອວ່າພະເຢຊູຄືນມາຈາກຕາຍນັ້ນ ເພິ່ນຕ້ອງຮັບຮູ້ວ່າພວກລູກສິດຂອງພະອົງບໍ່ໄດ້ລັກສົບພະອົງໄປເພາະ ເຂົາຈະຍອມຖືກສ່ຽງໄພເຖິງຂະໜາດໃດ? _________________

**25** ມີຫຼັກຖານ 3 ປະການທີ່ພະເຢຊູຄືນພະຊົນ

ກ. ມາເຖິງນີ້ ເຮົາໄດ້ສຶກສາເລື່ອງຫຼັກຖານໃດກ່ອນ? _________________________

ຂ. ໜ້າປົກບົດນີ້ ມີຮູບໃດທີ່ສະແດງເຖິງຫຼັກຖານນັ້ນ? _______________________

**26** ມີສາມຈຳພວກທີ່ອາດຈະລັກເອົາສົບຂອງພະອົງໄປ. ໃຫ້ຈົດແຕ່ລະຈຳພວກໄວ້ ແລ້ວຈົດເຫດທີ່ເຮົາຮູ້ວ່າເຂົາບໍ່ໄດ້ລັກ ສົບຂອງພະອົງໄປ. (ຕື່ມຄວາມທີ່ຂາດ)

ກ. ພວກ ___________ ບໍ່ໄດ້ລັກສົບພະອົງ. ຖ້າເຂົາລັກເອົາເຂົາຈະສະແດງ _______ ນັ້ນໃຫ້ຄົນເຫັນເພື່ອພິສູດວ່າພະ ອົງບໍ່ຄືນມາ.

ຂ. ພວກ _________ ບໍ່ໄດ້ເອົາ. ຖ້າເຂົາລັກສິ່ງໃດຈາກອຸບໂມງ ເຂົາຈະເອົາຜ້າປ່ານກ່ອນຈະເອົາ _______ ໄປ ເພາະ ເຂົາຈະເອົາແຕ່ສິ່ງມີລາຄາ.

ຄ. ພວກ _________ ບໍ່ໄດ້ເອົາ ເພາະເຂົາເຊື່ອແນ່ວ່າພະອົງຄືນຈາກຕາຍມາຈົນກວ່າເຂົາຍອມຖືກຂົ່ມເຫງເຖິງຄົນຈະ_______ ເຂົາ.

*ບໍ່ມີໃຜຈະແກ້ບັນຫາວ່າອຸບໂມງຫວ່າງເປົ່າ ນອກຈາກວ່າພະເຢຊູຄືນຈາກຕາຍແທ້.*

**27** ຫຼັກຖານນັ້ນພິສູດວ່າ ພະເຢຊູຄືນຈາກຫຍັງ? _________________________________

**28** ຫຼັກຖານທີສອງທີ່ພະເຢຊູຄືນຈາກຕາຍຄື: **ພະເຢຊູປາກົດມາວ່າມີຊີວິດຢູ່**

ມີຫຼາຍຄົນເຫັນກັບຕາທີ່ພະເຢຊູປາກົດມາຫຼາຍເທື່ອກໍບໍ່ແມ່ນສົບຄົນຕາຍປາກົດມາ ແຕ່ປາກົດມາຍັງມີຊີວິດຢູ່. ຢູ່ໜ້າປົກບົດນີ້ ແມ່ນຮູບໃດທີ່ສະແດງວ່າ ພະອົງປາກົດໃຫ້ຄົນເຫັນ? ____

**29** ມາເຖິງນີ້ ເຮົາໄດ້ຮຽນຮູ້ເລື່ອງຫຼັກຖານສອງປະການທີ່ພະເຢຊູຄືນຈາກຕາຍຄື: (ຕື່ມຄວາມ)

ທີ 1 ອຸບໂມງ _________ ຕາມໃນຮູບ _______ ໜ້າ

ທີ 2 ພະອົງປາກົດມາ _________ ຢູ່ ຕາມໃນຮູບ _______

**30** ຮູບ “ຄ” ສະແດງຫຼັກຖານໃດ? _________________________________________

**31** ເຫັນວ່າພວກສາວົກເຊື່ອແນ່ແທ້ຢ່າງໃດ? ___________________________________

*ແຕ່ຜູ້ທີ່ບໍ່ຍອມເຊື່ອອາດຈະຖືວ່າ ພວກສາວົກນັ້ນບໍ່ເຫັນ ມີແຕ່ເຂົາຄິດເຫັນໄປເອງ.*

**32** ສິ່ງທີ່ມະນຸດຄິດເຫັນໄປເອງນັ້ນ ບໍ່ມີຕົວຈິງ. ໃຫ້ອ່ານ ລູກາ 24:39-40

ກ. ຫຼັງຈາກຄືນພະຊົນແລ້ວ ພະອົງຍັງມີເນື້ອໜັງແລະມີກະດູກບໍ່? _________________

ຂ. ພະອົງມີມືມີຕີນບໍ່? _____________________________________________

ຄ. ພວກສາວົກຄຳເບິ່ງຕົວພະອົງໄດ້ບໍ່? ____________________________________

ງ. ຜີມີເນື້ອໜັງແລະມີກະດູກບໍ່? ________________________________________

ຈ. ສິ່ງທີ່ເຮົາຄິດເຫັນໄປເອງວ່າ ມີຕົວຈິງເຮົາສາມາດຄຳໄດ້ບໍ່? _____________________

ສ. ດັ່ງນັ້ນ ເຫັນວ່າພະອົງຄືນພະຊົນມີຕົວຢ່າງໃດ?
(ເລືອກ)

______ ເປັນແຕ່ວິນຍານ

______ ເປັນຕົວຈິງ

______ ມີແຕ່ພວກສາວົກຄິດເຫັນໄປເອງ



**33** ໃຫ້ອ່ານ ໂຢຮັນ 20:27-28 ພະເຢຊູບອກໂທມາໃຫ້ເຮັດຫຍັງ? (ເລືອກ)

ກ. ຢືນເບິ່ງຢູ່ໄກ

ຂ. ເຂົ້າໄປໃນທີ່ມືດຕັ້ງສະມາທິເລື່ອງພະອົງ

ຄ. ຫຍັບມາໃກ້ລູບເບິ່ງພະກາຍ

**34** ຖ້າມີຄົນມາຫາຄວາມວ່າ ພະເຢຊູບໍ່ໄດ້ຄືນຈາກຕາຍເປັນຕົນເປັນໂຕ. ມີແຕ່ພວກສາວົກຄິດເຫັນໄປເອງ ຫຼືອາດຈະ ແມ່ນຜີມາ ທ່ານຈະຕອບຢ່າງໃດທີ່ຖືກທີ່ສຸດ? (ເລືອກ ແຕ່ຂໍ້ດຽວ)

ກ. ພວກສາວົກສາມາດລູບເບິ່ງພະກາຍຂອງພະອົງ

ຂ. ພວກສາວົກສາມາດໄດ້ຍິນສຽງປາກຂອງພະອົງ

ຄ. ພວກສາວົກສາມາດເຫັນຮູບຮ່າງຂອງພະອົງ

**35** ແມ່ນດ້ວຍເຫດໃດທີ່ເຮົາຮູ້ວ່າພວກລູກສິດຂອງພະອົງພົບຕົວພະອົງແທ້ ບໍ່ແມ່ນເຂົາຄິດວາດພາບ ຫຼືຄິດເຫັນໄປເອງ? ______________________________________________

**36** ໃຫ້ອ່ານ 1 ໂກລິນໂທ 15:6

ກ. ມີຈັກຄົນເຫັນພະເຢຊູໃນເທື່ອດຽວນັ້ນ? ________________________________

ຂ. ໃນເມື່ອອາຈານໂປໂລຂຽນຈົດໝາຍ ຄົນສ່ວນຫຼາຍໃນຈຳພວກນັ້ນຍັງມີຊີວິດຢູ່ບໍ່? _____

ຄ. ເປັນຫຍັງອາຈານໂປໂລຍົກເລື່ອງທີ່ຄົນເຫຼົ່ານັ້ນຍັງມີຊີວິດຢູ່? (ເລືອກ ຂໍ້ດຽວ)

1. ______ ເພື່ອເປັນຫຼັກຖານວ່າສັດຕູຂ້າເຂົາທັງໝົດບໍ່ໄດ້.
2. ______ ເພື່ອເປັນຫຼັກຖານວ່າຄຼິດສະຕຽນມີຊີວິດຍືນຍາວກວ່າຄົນອື່ນ.
3. ______ ເພື່ອເປັນຫຼັກຖານວ່າຍັງມີພະຍານທີ່ເຫັນເຫດການນັ້ນ.

**37** ຜູ້ດຽວອາດຈະມອງເຫັນບໍ່ຖືກ ມີແຕ່ນ້ອຍເທື່ອທີ່ສອງຄົນເຫັນບໍ່ຖືກ ບໍ່ໜ້າຈະເປັນໄປໄດ້ທີ່ 3 ຄົນຜິດ ທີ່ຈະມີ 500 ຄົນ ເຫັນພະອົງໃນຄາວດຽວແລ້ວຈະຜິດໄປ ທັງ 500 ຄົນຈະເປັນໄປໄດ້ບໍ່? ______________________________________________________________

**38** 500 ຄົນນັ້ນ ເຫັນພະເຢຊູໃນ _________ ດຽວ. (ຕື່ມຄວາມທີ່ຂາດ)

**39** ເຮົາຮູ້ດີວ່າພະເຢຊູຄືນຈາກຕາຍດັ່ງຕໍ່ໄປນີ້: (ຕື່ມຄວາມທີ່ຂາດ)

ກ. ພວກສາວົກສາມາດ _________ ກັບຕາແລະ _________ ກັບມືໄດ້.

ຂ. ມີຄົນເຫັນພະອົງໃນຄາວດຽວ _________ ກວ່າຄົນ.

**40** ກ. ພວກລູກສິດນັ້ນ ເຊື່ອຢ່າງໃດ? ________________________________________

ຂ. ເຊື່ອເຖິງຂະໜາດໃດ? ______________________________________________

**41** ແມ່ນໂດຍສາເຫດສອງປະການໃດທີ່ເຮົາຮູ້ວ່າພວກລູກສິດເຫັນພະອົງຢ່າງເປັນຈິງ?

ກ. ______________________________________________________________

ຂ. ______________________________________________________________

**42** ມີຄົນຢູ່ 3 ຈຳພວກທີ່ອາດຈະລັກເຂົ້າອຸບໂມງທີ່ເຂົາຝັງສົບຂອງພະເຢຊູໄວ້. ໃຫ້ທ່ານຈົດສາມຈຳພວກນັ້ນໄວ້ ແລ້ວ ຈົດຫຼັກຖານທີ່ເຮົາຮູ້ໄດ້ວ່າ ເຂົາບໍ່ໄດ້ລັກສົບຂອງພະອົງ. (ຕື່ມຄວາມ)

ກ. ພວກ _____________ ບໍ່ໄດ້ລັກສົບຂອງພະອົງເພາະ ________________________

________________________________________________________________

ຂ. ພວກ _____________ ບໍ່ໄດ້ລັກສົບຂອງພະອົງເພາະ ________________________

________________________________________________________________

ຄ. ພວກ _____________ ບໍ່ໄດ້ລັກສົບຂອງພະອົງເພາະ ________________________

________________________________________________________________

**43** ທີ່ພວກລູກສິດຂອງພະອົງເຊື່ອແນ່ນອນວ່າພະອົງຄືນມາຈາກຕາຍ ເຮົາຮູ້ໄດ້ຢ່າງໃດ?

________________________________________________________________

**44** ໃຫ້ທ່ານຍົກຫຼັກຖານສອງປະການ ທີ່ພວກລູກສິດຂອງພະອົງເຫັນພະອົງຕົວຈິງຫຼັງຈາກຄືນຈາກຕາຍ ເປັນເນື້ອໜັງ ແລະເປັນກະດູກ.

ກ. ________________________________________________________________

ຂ. ________________________________________________________________

**45** ກ. ເຮົາຮູ້ແລ້ວວ່າພວກລູກສິດຂອງພະອົງ ບັນທຶກແຕ່ຄວາມຈິງເລື່ອງການຄືນພະຊົນ ເພາະຫຍັງ ________________________________________________________

ຂ. ເຂົາເຊື່ອເຖິງຂະໜາດໃດ ________________________________________

**46** ຖ້າເຮົາຈະວັດຜົນຫຼັກຖານຕ່າງໆ ກ່ຽວກັບທີ່ພະອົງປາກົດມາຫຼັງຈາກການສິ້ນພະຊົນ. ຫຼັກຖານເຫຼົ່ານັ້ນພິສູດວ່າຢ່າງໃດ? ______________________________________

| |
|---|
| ເພື່ອແລກປ່ຽນຄວາມຄິດເຫັນກັນໃນປະຊຸມ: ໃຫ້ອ່ານ ເຮັບເລີ 9:27. ຕາມຂໍ້ພະຄຳພີນັ້ນ ຈະມີການວຽນຕາຍວຽນເກີດບໍ່? ໃຫ້ສັງເກດວ່າພະເຢຊູຄືນມາໂດຍມີພະກາຍອັນດຽວ ຍັງມີບາດແຜຢູ່. |

*ໃຫ້ເປີດບົດເສັງທີ 2!*

**ຄຳຕອບ:**

**1** *ຮູບ ຂ*

**2** *ອຸບໂມງຫວ່າງເປົ່າ*

**3** *ຍືວ*

**4** *ກຈກ 2:32 ກຈກ 3:15 ກຈກ 4:10 ກຈກ 4:33 ກຈກ 5:30*

**5** *ການຄືນພະຊົນ*

**6** *ກ. ຖືກ*

**ຄຳຕອບ (ຕໍ່):**

**7** *ຂ ຖືກ*

**8** *ກ. ຢາກຍົກ ຂ. ບໍ່ເຫັນ*

**9** *ຄ ຖືກ*

**10** *ເພາະເຂົາບໍ່ມີສົບທີ່ຈະສະແດງ*

**11** *ຈະສະແດງໃຫ້ປະຊາຊົນເຫັນວ່າພະເຢຊູບໍ່ຄືນ.*

**12** *(ບໍ່ມີຄຳຕອບຕາຍຕົວ ໃຫ້ຖືກກັບຄຳຖາມ 127.11)*

**13** *ກ. ອຸບໂມງຫວ່າງເປົ່າ ຂ. ຍົວ ຄ. ເພາະເຂົາເອົາສົບມາສະແດງໃຫ້ຄົນເຫັນບໍ່ໄດ້*

**14** *ກ. ຜ້າປ່ານ ຂ. ຜ້າປ່ານ*

**15** *ກ. ອັນທີ່ມີລາຄາ ຂ. ບໍ່ປະ ຄ. ບໍ່ມີ ງ. ລັກຜ້າປ່ານປະສົບໄວ້*

**16** *ກ. ສົບຂອງພະເຢຊູ ຂ. ໃຫ້ຄົນຮູ້ວ່າບໍ່ໄດ້ຄືນຈາກຕາຍ ຄ. ຜ້າປ່ານ*
*ງ. ສົບ (ເພາະບໍ່ມີລາຄາ)*

**17** *ກ. ບໍ່ ຂ. ພະເຢຊູ*

**18** *ຂ ຖືກ*

**19** *ເຊື່ອ*

**20** *ກ ຄ ງ ຖືກ*

**21** *ຄ ຖືກ*

**22** *ກ ຖືກ*

**23** *ການຂົ່ມເຫງແລະຕາຍ*

**24** *ເຖິງການຂົ່ມເຫງແລະຕາຍ*

**25** *ກ. ອຸບໂມງທີ່ຫວ່າງເປົ່າ ຂ. ຮູບ ຂ*

**26** *ກ. ເຈົານາຍຍົວ... ສົບ ຂ. ຂະໂມຍ... ສົບ ຄ. ລູກສິດ... ຂ້າ*

**27** *ຈາກຕາຍ*

**28** *ຮູບ ຄ*

**29** *ທີ 1 ຫວ່າງເປົ່າ... ຂ ທີ 2 ມີຊີວິດ... ຄ*

**30** *ພະອົງປາກົດມາວ່າມີຊີວິດຢູ່*

**31** *ເຊື່ອວ່າພະເຢຊູຄືນພະຊົນ*

**32** *ກ. ມີ ຂ. ມີ ຄ. ໄດ້ ງ. ບໍ່ມີ ຈ. ບໍ່ໄດ້ ສ. ເປັນຕົວຈິງ*

**33** *ຄ ຖືກ*

**34** *ກ ຖືກ*

**35** *ເພາະເຂົາລູບເບິ່ງພະກາຍ ມີຕົວຄົບຖ້ວນທັງມືທັງຕີນ (ຄຳຄ້າຍຄືກັນກໍໄດ້)*

**36** *ກ. 500 ຄົນ ຂ. ມີ ຄ. 3 ຖືກ*

**37** *ຈະເປັນໄປບໍ່ໄດ້*

**ຄຳຕອບ (ຕໍ່):**

**38** *ຄາວ*

**39** *ກ. ເຫັນ. .. ລູບ ຂ. 500*

**40** *ກ. ເຊື່ອວ່າພະອົງຄືນພະຊົນ. ຂ. ເຖິງຈະຍອມຖືກຂົ່ມເຫງ ແລະຖືກເຂົາຂ້າ.*

**41** *ກ. ເຂົາທັງເຫັນຮູ້ແລະລູບເບິ່ງພະອົງໄດ້. ຂ. ມີ 500 ກວ່າຄົນເຫັນພະອົງໃນຄາວດຽວ.*

**42** *ກ. ເຈານາຍຢິວ... ຖ້າເຂົາລັກເອົາ ເຂົາຈະສະແດງສົບໃຫ້ຄົນເຫັນເພື່ອພິສູດວ່າພະອົງບໍ່ໄດ້ຄືນມາ.*

*ຂ. ຂະໂມຍ... ຖ້າເຂົາເປີດອຸບໂມງແລ້ວ ເຂົາຈະເອົາຜ້າປ່ານໄປ ປະສົບໄວ້.*

*ຄ. ລູກສິດ... ຖ້າເຂົາລັກເອົາແລ້ວເຂົາຈະບໍ່ຍອມສ່ຽງໄພໃຫ້ຄົນຂົ່ມເຫງແລະຂ້າ.*

**43** *ເພາະເຂົາຍອມສ່ຽງຊີວິດເພື່ອພະອົງ.*

**44** *ກ. ເຂົາເຫັນຮູ້ແລະລູບເບິ່ງພະກາຍຂອງພະອົງ.*

*ຂ. ມີ 500 ກວ່າຄົນເຫັນພະອົງໃນຄາວດຽວ.*

**45** *ກ. ເຂົາເອງເຊື່ອແນ່ນອນແທ້ ຂ. ເຂົາຍອມສ່ຽງໄພເຖິງຈະເສຍຊີວິດ*

**46** *ພະເຢຊູຄືນພະຊົນ*